ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 3616 /ຮສສ

ນະຄອນຫຼວງວຽງຈັນ, ວັນທີ 19/09/18

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມແຜນການ ແລະ ການຮ່ວມມືສາກົນ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມສະບັບເລກທີ 200/ນຍ, ລົງວັນທີ 30 ມິຖຸນາ 2017;
- ອີງຕາມ ໜັງສືສະເໜີຂອງກົມແຜນການ ແລະ ການຮ່ວມມືສາກົນ ແລະ ການຄົ້ນຄວ້າຂອງກົມຈັດຕັ້ງ ແລະ ພະນັກງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

**ລັດຖະມົນຕີ ຕົກລົງ:**

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກຂອງກົມແຜນການ ແລະ ການຮ່ວມມືສາກົນ ເພື່ອຮັບປະກັນການເຄື່ອນໄຫວຂອງກົມແຜນການ ແລະ ການຮ່ວມມືສາກົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກົມແຜນການ ແລະ ການຮ່ວມມືສາກົນ ຂຽນຫຍໍ້ວ່າ “ ຜຮ ” ແມ່ນໂຄງປະກອບກົງຈັກຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ມີພາລະບົດບາດເປັນເສນາທິການໃຫ້ຄະນະນຳກະຊວງໃນການຄົ້ນຄວ້າສ້າງນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາວຽກແຮງງານ ແລະ ສະຫວັດດີການສັງຄົມ ລວມທັງການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດວຽກແຜນການ ແລະ ການປະເມີນ, ວຽກສະຖິຕິ, ວຽກຮ່ວມມືອາຊຽນ ແລະ ວຽກຮ່ວມມືສາກົນ.

## ໝວດທີ 2

## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍນະໂຍບາຍຂອງລັດ ເພື່ອສ້າງວິໄສທັດ, ແຜນຍຸດທະສາດ, ແຜນພັດທະນາ, ແຜນງານ ແລະ ແຜນການ ດ້ານວຽກງານແຮງງານ ແລະ ສະຫວັດດີການສັງຄົມໄລຍະສັ້ນ, ກາງ ແລະ ໄລຍະຍາວ;